ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມສ້າງຄູ
ວິທະຍາໄລຄູສາລະວັນ
ພະແນກວິຊາການ

ເລກທີ 2373/ວຄວ
ສາລະວັນ, ວັນທີ 08 JUL 2024

# ບົດບັນທຶກກອງປະຊຸມສະພາວິຊາການ ສະໄໝວິສາມັນຄັ້ງທີ 3 ປະຈຳສົກຮຽນ 2023-2024

- **ອີງຕາມ:** ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ແຜນການເຄື່ອນໄຫວຂອງວິທະຍາໄລຄູສາລະວັນ ສະບັບເລກທີ 814 /ສສຈຕ/10 ລົງວັນທີ 09/04/2010 ໃນມາດຕາ 8 ຂໍ້ 8.3 ວ່າດ້ວຍບຸກຄະລະກອນເຂົ້າຮ່ວມກອງປະຊຸມສະພາວິຊາການ
- **ອີງຕາມ:** ແຜນການເຄື່ອນໄຫວວຽກວິຊາການ ຂອງວິທະຍາໄລຄູສາລະວັນ ປະຈຳສົກຮຽນ 2023-2024 ເລກທີ 361/ວຄວ, ລົງວັນທີ 8 ກຸມພາ 2024

## I. ສະພາບລວມ

ກອງປະຊຸມສະພາວິຊາການສະໄໝວິສາມັນຄັ້ງທີ3 ໄດ້ໄຂຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 4 ກໍລະກົດ 2024 ຢູ່ທີ່ຫ້ອງປະຊຸມ ວິທະຍາໄລຄູສາລະວັນ, ພາຍໃຕ້ການເປັນປະທານຂອງ ທ່ານ ວັດທະນາ ໝັ້ນວິໄລ ຜູ້ອຳນວຍການວິທະຍາໄລຄູ ສາລະວັນ, ມີຄະນະອຳນວຍການ, ຕາງໜ້າອົງການຈັດຕັ້ງແມ່ຍິງ, ຊາວໜຸ່ມ, ກຳມະບານ, ຫົວໜ້າພະແນກ, ຫົວໜ້າພາກວິຊາ, ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດຈຳນວນ 28 ທ່ານ, ຍິງ 9 ທ່ານ.

➢ **ຈຸດປະສົງຂອງກອງປະຊຸມສະພາວິຊາການ ສະໄໝວິສາມັນຄັ້ງທີ 3 ປະຈຳສົກຮຽນ 2023-2024**

- ຜ່ານບົດສະຫຼຸບການຈັດຕັ້ງປະຕິບັດການຮຽນ-ການສອນ ແລະ ການສອບເສັງພາກຮຽນ2 ປະຈຳສົກຮຽນ 2023-2024
- ຄົ້ນຄວ້າ ແລະ ຕັດສິນຜົນການສອບເສັງຂອງນັກສຶກສາ

## II. ວາລະດຳເນີນ ແລະ ເນື້ອໃນຂອງກອງປະຊຸມ

ໃນເວລາ 13:30 ນາທີ ຈັດຕັ້ງພິທີໄດ້ຜ່ານວາລະ ແລະ ຈຸດປະສົງຂອງກອງປະຊຸມ ສະພາວິຊາການສະໄໝວິສາມັນຄັ້ງທີ3 ຫຼັງຈາກນັ້ນ ທ່ານ ວັດທະນາ ໝັ້ນວິໄລ ປະທານກອງປະຊຸມໄດ້ໃຫ້ຄຳເຫັນ ແລະ ກ່າວເປີດພິທີຢ່າງເປັນທາງການ ໂດຍການໃຫ້ຄຳເຫັນຂອງທ່ານໄດ້ເນັ້ນເຖິງການຂຶ້ນຫ້ອງສອນຂອງຄູ-ອາຈານໃນແຕ່ລະພາກວິຊາໃຫ້ມີຄວາມຮັບຜິດຊອບສູງ, ການຈັດກິດຈະກຳການຮຽນ-ການສອນຂອງແຕ່ລະພາກວິຊາໃຫ້ວິຊາການຄຸ້ມຄອງຫຼັກສູດແຕ່ລະພາກວິຊາຕິດຕາມ, ກວດກາຢ່າງເປັນປົກກະຕິ. ຫຼັງຈາກນັ້ນ ທ່ານ ອຈ ປອ ສຸພັນ ເທບພະວົງສາ ຫົວໜ້າພະແນກວິຊາການ ໄດ້ຂຶ້ນຜ່ານບົດສະຫຼຸບການຈັດຕັ້ງປະຕິບັດກິດຈະກຳການຮຽນ-ການສອນ ແລະ ການສອບເສັງພາກຮຽນ2 ປະຈຳສົກຮຽນ 2023-2024 ຕໍ່ດ້ວຍ ທ່ານ ຊອ ປທ ສາຄອນ ສີສະຫວັດດີ ຮອງຫົວໜ້າພະແນກວິຊາການຂຶ້ນລາຍງານຜົນສຳເລັດການສຶກສາຂອງນັກສຶກສາປີສຸດທ້າຍສົກຮຽນ 2023-2024 ເຊິ່ງມີນັກສຶກສາທີ່ຈະສຳເລັດທັງໝົດຈຳນວນ 144 ທ່ານ, ຍິງ 93 ທ່ານ. ພາກປົກກະຕິ 75 ທ່ານ, ຍິງ 47 ທ່ານ, ຕໍ່ເນື່ອງປົກກະຕິ 12 ທ່ານ, ຍິງ 2 ທ່ານ, ຕໍ່ເນື່ອງພັກສົ້ນປີຮຽນ 57 ທ່ານ, ຍິງ 44 ທ່ານ. ແລະ ການຍ້ອງຍໍນັກສຶກສາແຕ່ລະສາຍຮຽນທີ່ຄະແນນສະເລ່ຍເຖິງເກນ ເຊິ່ງປະກອບດ້ວຍສອງຂັ້ນດັ່ງນີ້: ຂັ້ນກົມສ້າງຄູ, ຂັ້ນວິທະຍາໄລຄູ. ຈຳນວນ

สแกนด้วย CamScanner

ນັກສຶກສາທີ່ໄດ້ຮັບການຍ້ອງຍໍແຕ່ລະຂັ້ນປະຈຳສົກຮຽນ 2023-2024 ຈຳນວນ 141 ທ່ານ, ຍິງ 91 ທ່ານ. ຂັ້ນກົມສ້າງຄູ 77 ທ່ານ, ຍິງ 58 ທ່ານ, ຂັ້ນວິທະຍາໄລຄູ 64 ທ່ານ, ຍິງ 33 ທ່ານ, ບໍ່ໄດ້ຮັບການຍ້ອງຍໍ 3 ທ່ານ, ຍິງ 2 ທ່ານ. ຫຼັງຈາກນັ້ນ ທ່ານ ປທ ອຸດຕະມະ ແສງອາລຸນ ຮອງຜູ້ອຳນວຍການຊີ້ນຳວຽກວິຊາການ ກໍ່ໄດ້ມີຄຳເຫັນຕໍ່ກັບກອງປະຊຸມເຊິ່ງທ່ານກໍ່ໄດ້ເນັ້ນໜັກຫຼາຍບັນຫາເຊັ່ນ: ບົດສະຫຼຸບການຈັດຕັ້ງປະຕິບັດການຮຽນ-ການສອນ ແລະ ການສອບເສັງຍັງບໍ່ທັນລະອຽດ, ຈະແຈ້ງ ຮຽກຮ້ອງໃຫ້ວິຊາການຄຸ້ມຄອງຫຼັກສູດແຕ່ລະພາກວິຊາ ແລະ ພະແນກວິຊາການເອົາໃຈໃສ່ຕື່ມໃນການເກັບກຳຂໍ້ມູນໃຫ້ລະອຽດໂດຍສະເພາະນັກສຶກສາທີ່ປະລະການຮຽນແຕ່ລະຫ້ອງ. ເຊິ່ງທ່ານກໍ່ໄດ້ເນັ້ນໜັກຕື່ມ ສຳລັບຄູ-ອາຈານຈຳນວນໜຶ່ງທີ່ມາການບໍ່ປົກກະຕິ, ຂຶ້ນຫ້ອງສອນບໍ່ປົກກະຕິເຊິ່ງຈະຕ້ອງໄດ້ແກ້ໄຂສາເຫດທີ່ພາໃຫ້ເກີດປັດໃຈເຫຼົ່ານີ້ຢ່າງຮີບດ່ວນ ແລະ ຮັດກຸມ. ນອກຈາກນີ້ກອງປະຊຸມໄດ້ຄົ້ນຄວ້າ, ຕັດສິນ ແລະ ແລກປ່ຽນສົນທະນາກ່ຽວກັບວຽກງານດ້ານວິຊາການຢ່າງກົງໄປກົງມາ ພ້ອມທັງເຫັນດີເອກະພາບເພື່ອເປັນບ່ອນອີງໃນການປະຕິບັດໜ້າວຽກໃນຕໍ່ໜ້າ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ຕໍ່ກັບນັກສຶກສາທີ່ຂາດຮຽນ ( ລາພັກ ): ເຫັນດີໃຫ້ນັກສຶກສາລາພັກຕາມລະບຽບ 258 ຕາມເຫດຜົນທີ່ເໝາະສົມກັບຄວາມເປັນຈິງ ໂດຍມອບໃຫ້ຄູສອນປະຈຳລາຍວິຊາມອບກິດຈະກຳການຮຽນ-ການສອນໃຫ້ຜູ້ກ່ຽວ.
2. ຕໍ່ກັບນັກສຶກສາໂຄງການ EESDP ນາງ ດາວພອນ ບຸນຜາແກ້ວ ທີ່ບໍ່ສະບາຍ: ສຳລັບສົກຮຽນ 2023-2024 ເຫັນດີຜູ້ກ່ຽວພັກຮັກສາສຸຂະພາບຢູ່ເຮືອນ ໂດຍໃຫ້ຄູສອນປະຈຳລາຍວິຊາມອບກິດຈະກຳການຮຽນ-ການສອນໃຫ້ຜູ້ກ່ຽວທາງອອນລາຍ ແລະ ສົ່ງທາງອອນລາຍ. ຖ້າຫາກໃນສົກຮຽນ 2024-2025 ຜູ້ກ່ຽວຫາກຍັງບໍ່ສາມາດມາຮຽນເປັນປົກກະຕິໄດ້ເຫັນດີໃຫ້ຜູ້ກ່ຽວສະຫຼະສິດ, ຕັດສິດໃຫ້ຜູ້ກ່ຽວພົ້ນສະຖານະພາບການເປັນນັກສຶກສາຂອງວິທະຍາໄລຄູ ແລະ ມອບໃຫ້ພະແນກວິຊາການແຈ້ງທາງໂຄງການ EESDP ໃຫ້ຮັບຮູ້.
3. ນັກສຶກສາປີສຸດທ້າຍທີ່ຕິດ F : ເຫັນດີໃຫ້ຜູ້ກ່ຽວລົງທະບຽນຮຽນຊ້ຳ.
4. ຕໍ່ກັບ ທ້າວ ພົມວິຈິດ ສີລີປັນຍາ ນັກສຶກສາຕໍ່ເນື່ອງພັກສົ້ນປີຮຽນ ສາຍພາສາອັງກິດ ປີ 3 ທີ່ໄດ້ຄະແນນ 0 ແລະ ຍັງຮຽນທຶດສະດີ. ເຫັນດີໃຫ້ຜູ້ກ່ຽວມາຮຽນ ສຳລັບລາຍວິຊາທີ່ມີຄະແນນ 0 ແມ່ນເຫັນດີໃຫ້ຜູ້ກ່ຽວມາລົງທະບຽນຮຽນຊ້ຳ.
5. ຕໍ່ກັບຄູ-ອາຈານລົງສອນຊ່ວຍສາທິດ: ເຫັນດີ ບໍ່ປະຕິບັດນະໂຍບາຍເງິນອຸດໜູນ 20% ໃຫ້ຜູ້ກ່ຽວ ສຳລັບຄູ-ອາຈານສອນຜ່ານມາທີ່ໄດ້ຮັບເງິນອຸດໜູນເພີ່ມ 20% ແມ່ນເຫັນດີມອບໃຫ້ພະແນກຈັດຕັ້ງພະນັກງານ, ກວດກາປະເມີນຜົນ ແລະ ປະກັນຄຸນນະພາບຍົກເລີກ.
6. ຕໍ່ກັບຫ້ອງຟັງສຽງ: ເຫັນດີມອບໃຫ້ພະແນກວິຊາການ ແລະ ພະແນກບໍລິຫານ ແລະ ການເງິນສົມທົບກັນກວດກາລາຍການອຸປະກອນຕ່າງໆ ແລ້ວເຮັດໃບມອບ-ຮັບໃຫ້ພາກວິຊາສ້າງຄູພາສາອັງກິດ-ໄອຊີທີເປັນຜູ້ຮັບຜິດຊອບຕໍ່ ໃຫ້ສຳເລັດ.
7. ຕໍ່ກັບການລົງລາຍເຊັນໃນປຶ້ມບັນທຶກ,ຕິດຕາມການຂຶ້ນຫ້ອງສອນຂອງຄູ-ອາຈານແຕ່ລະພາກວິຊາ ໃນພາກຕໍ່ເນື່ອງພັກສົ້ນປີຮຽນ: ເຫັນດີໃຫ້ຜູ້ທີ່ມີລາຍຊື່ສອນຕາມແຜນແບ່ງປັນ ແລະ ຕາຕະລາງການສອນລົງລາຍເຊັນເອງ ສຳລັບຄູ-ອາຈານທີ່ຂຶ້ນສອນແທນແມ່ນບໍ່ໃຫ້ລົງລາຍເຊັນໃສ່ ມອບໃຫ້ພາກວິຊາຕິດຕາມ,ກວດກາ ແລະ ລາຍງານຜົນໃຫ້ພະແນກວິຊາການໄດ້ຮັບຮູ້.
8. ຕໍ່ກັບນັກສຶກສາຕໍ່ເນື່ອງພັກສົ້ນປີຮຽນທີ່ເປັນຄູສອນໃນເທດສະບານເມືອງສາລະວັນ: ຫຼັງຈາກທີ່ສຳເລັດການຮຽນ-ການສອນໃນຄາບເຊົ້າແລ້ວ ເຫັນດີໃຫ້ຜູ້ກ່ຽວກັບໄປສອນໃນໂຮງຮຽນຂອງຕົນທີ່ສັງກັດຢູ່ເວລາທີ່ບໍ່ມີຊົ່ວໂມງສອນໃຫ້ກັບມາເຮັດກິດຈະກຳການຮຽນ-ການສອນຢູ່ວິທະຍາໄລຄູ ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງສາລະວັນເຮັດຕາຕະລາງການສອນຂອງຄູໃນເທດສະບານທີ່ເປັນນັກສຶກສາຄູ ແລ້ວສົ່ງໃຫ້ວິທະຍາໄລຄູຮັບຮູ້.
9. ຕໍ່ກັບບົດສະຫຼຸບທີ່ໃຫ້ມີການຍ້ອງຍໍຄູທີ່ສອນດີ-ສອນເກັ່ງ: ເຫັນດີມອບໃຫ້ພະແນກຈັດຕັ້ງພະນັກງານ, ກວດກາປະເມີນຜົນ ແລະ ປະກັນຄຸນນະພາບ ສົມທົບກັບພະແນກວິຊາການ ເຮັດການຍ້ອງຍໍຄູ ໂດຍເລີ່ມປະຕິບັດໃນສົກຮຽນຕໍ່ໄປ.

สแกนด้วย CamScanner

- ຕັດສິນນັກສຶກສາທີ່ປະລະການຮຽນ
    - ນາງ ແຕງອ່ອນ ຈັນທະລັງສີ ອະນຸບານ 12+4 ປີ 2 ຕັດສິນປະລະການຮຽນ
    - ນາງ ສຸກສະຫວັນ ວົງດາລາດ ອະນຸບານ 12+4 ປີ 3 ຕັດສິນປະລະການຮຽນ
    - ພຣະ ບຸນກອນ ສອນສະຫວັນ ໄອຊີທີ 12+4 ປີ 1 ຕັດສິນປະລະການຮຽນ
    - ທ້າວ ກີນ້ອຍ ເຢີດທາພອນ ຊີວະສາດ12+4 ປີ 2 ຕັດສິນປະລະການຮຽນ
- ຕັດສິນນັກສຶກສາລົງທະບຽນຮຽນຊໍ້າ
    - ທ້າວ ພິມວິຈິດ ສິລິປັນຍາ ນັກສຶກສາຕໍ່ເນື່ອງພັກສົ້ນປີຮຽນ ສາຍພາສາອັງກິດ ປີ 3 ຮຽນຊໍ້າໃນລາຍວິຊາ ລາວສຶກສາ
    - ນາງ ຄໍາວິໄລ ພິມມະສອນ ປະຖົມ12+2 ປີ2 ຮຽນຊໍ້າວິຊາ:ການສອນວິທະຍາສາດ ແລະ ສິ່ງແວດລ້ອມ
    - ນາງ ນົງນ້ອຍ ນິພອນ ປະຖົມ12+2 ປີ2 ຮຽນຊໍ້າວິຊາ:ການສອນວິທະຍາສາດ ແລະ ສິ່ງແວດລ້ອມ

## III. ຄໍາເຫັນ ແລະ ທິດຊີ້ນໍາຂອງທ່ານປະທານ

ວາລະສຸດທ້າຍຂອງກອງປະຊຸມ ທ່ານ ວັດທະນາ ໝັ້ນວິໄລ ຜູ້ອໍານວນການວິທະຍາໄລຄູສາລະວັນ ເຊິ່ງເປັນປະທານໃນກອງປະຊຸມສະພາວິຊາການ ສະໄໝວິສາມັນຄັ້ງທີ3 ໄດ້ໃຫ້ຄໍາແນະນໍາກ່ຽວກັບກອງປະຊຸມເຊິ່ງທ່ານກໍ່ໄດ້ເນັ້ນໜັກເຖິງວຽກງານກິລາ-ສິລະປະໃຫ້ມີການແຂ່ງຂັນເພື່ອກຽມຄວາມພ້ອມເພື່ອຮັບໃຊ້ໃນການພົບປະສິດເກົ່າທີ່ຈະຈັດຂຶ້ນໃນປີນີ້ ເພື່ອເຮັດໃຫ້ງານມີຂະບວນຟົດຟື້ນ, ນອກຈາກນີ້ແລ້ວທ່ານຍັງໄດ້ເນັ້ນໜັກຕື່ມເຊັ່ນ: ສືບຕໍ່ປະຕິບັດຕາມແຜນວິຊາການທີ່ວາງອອກ ວຽກງານກິດຈະກໍາການຮຽນ-ການສອນ, ການອະນາໄມຕາມເຂດທີ່ຮັບຜິດຊອບ ມອບໃຫ້ພາກວິຊາ, ພະແນກວິຊາການ ແລະ ພະແນກບໍລິຫານ-ການເງິນ ກວດກາໃຫ້ເປັນປົກກະຕິ.

ກອງປະຊຸມໄດ້ດໍາເນີນມາຮອດເວລາ 16:00 ນາທີ ກໍ່ໄດ້ປິດລົງຢ່າງເປັນທາງການ.

( ປະທານກອງປະຊຸມ )
ຜູ້ອໍານວຍການວິທະຍາໄລຄູສາລະວັນ

ວິທະຍາໄລຄູ ສາລະວັນ

ວັດທະນາ ໝັ້ນວິໄລ

ວັນທີ 8-7-2024
ຜູ້ບັນທຶກກອງປະຊຸມ

ສຸວັນໄຊ

สแกนด้วย CamScanner